ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110



# ກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງທີ II ປະຈຳປີ 2023



ໃນຕອນເຊົ້າຂອງວັນທີ 16 ສິງຫາ 2023 ທີ່ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ເປີດກອງປະຊຸມສະພາບໍລິຫານ ທຫລ ຄັ້ງທີ II ປະຈຳປີ 2023 ຂຶ້ນໂດຍການເປັນປະທານຂອງທ່ານ ບຸນເຫຼືອ ສິນໄຊວໍຣະວົງ ປະທານສະພາບໍລິຫານ ທຫລ, ຜູ້ວ່າການ ທຫລ, ພ້ອມດ້ວຍການເຂົ້າຮ່ວມຂອງບັນດາທ່ານຮອງປະທານສະພາບໍລິຫານ, ກຳມະການສະພາບໍລິຫານ ແລະ ທ່ານຮອງຜູ້ວ່າການ ທຫລ ເຂົ້າຮ່ວມ.

ການເປີດກອງປະຊຸມສະພາບໍລິຫານ ທຫລ ໃນຄັ້ງນີ້ເປັນການປະຕິບັດຕາມລະບອບການປະຊຸມຂອງສະພາບໍລິຫານ ທຫລ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ, ພ້ອມທັງເປັນການປຶກສາຫາລື, ປະກອບຄຳຄິດຄຳເຫັນຕໍ່ບັນຫາສຳຄັນຈຳນວນໜຶ່ງ ເພື່ອລົງມະຕິພິຈາລະນາຮັບຮອງ. ໃນນີ້, ສະມາຊິກສະພາບໍລິຫານ ທຫລ ໄດ້ເອົາໃຈໃສ່ຄົ້ນຄວ້າ ແລະ ທົບທວນຄືນການຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ມາດຕະການຕ່າງໆ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດ, ຮັກສາສະຖຽນສະພາບທາງດ້ານການເງິນ, ລະບົບຊຳລະສະສາງ ທີ່ຕິດພັນກັບວາລະແຫ່ງຊາດໃນການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ຈັດຕັ້ງປະຕິບັດວຽກງານອື່ນໆ ຕາມມະຕິຂອງສະພາບໍລິຫານ ທຫລ ດ້ວຍຄວາມເປັນເຈົ້າການ ແລະ ຮັບຜິດຊອບສູງ ເປັນຕົ້ນ: ໄດ້ຄົ້ນຄວ້າປັບປຸງຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ ແລະ ໄດ້ລາຍງານໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງ

ສະພາແຫ່ງຊາດ ຊຸດທີ IX, ຄຳສັ່ງຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດກ່ຽວກັບການນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ. ແຕ່ການຈັດຕັ້ງປະຕິບັດຕົວຈິງ ແມ່ນຍັງມີສິ່ງທ້າທາຍຫຼາຍດ້ານ ເປັນຕົ້ນ: ການເພີ່ມຂຶ້ນສູງຂອງລາຄານ້ຳມັນຢູ່ຕະຫຼາດສາກົນ, ຄວາມຜັນຜວນຂອງລາຄາຄຳ, ຄ່າເງິນສະກຸນຫຼັກຢູ່ຕະຫຼາດສາກົນ ແຂງຄ່າຂຶ້ນ ຊຶ່ງມີຜົນມາຈາກບັນຫາຄວາມຂັດແຍ່ງພູມມີສາດການ ເມືອງລະຫວ່າງປະເທດມະຫາອຳນາດ ເຮັດໃຫ້ການຮັກສາສະຖຽນລະພາບເງິນຕາແຫ່ງຊາດ ປະສົບກັບບັນຫາຫຼາຍດ້ານ ໂດຍສະເພາະແມ່ນອັດຕາເງິນເຟີ້ຍັງຢູ່ໃນລະດັບສູງ, ອັດຕາແລກປ່ຽນເງິນກີບທຽບໃສ່ເງິນໂດລາ ແລະ ທຽບໃສ່ເງິນບາດ ຍັງມີທ່າອ່ຽງອ່ອນຄ່າແຮງ ແລະ ມີສ່ວນຕ່າງກວ້າງອອກ ແລະ ສະພາບຄວາມຕ້ອງການເງິນຕາຕ່າງປະເທດໃນການຊຳລະກັບຕ່າງປະເທດຂອງ ສປປ ລາວ ຍັງຢູ່ໃນລະດັບສູງ.

ກອງປະຊຸມໄດ້ຮັບຟັງການລາຍງານ ແລະ ຄົ້ນຄວ້າພິຈາລະນາປະກອບຄຳເຫັນໃສ່ເອກະສານທີ່ສຳຄັນຫຼາຍສະບັບ ຄື: 1) ບົດສະຫຼຸບການເຄື່ອນໄຫວວຽກງານຂອງ ທຫລ ທຫລ 7 ເດືອນຕົ້ນປີ ແລະ ທິດທາງແຜນການ 5 ເດືອນທ້າຍປີ 2023, 2) ການຈັດຕັ້ງປະຕິບັດແຜນເງິນຕາ 7 ເດືອນຕົ້ນປີ ແລະ ທິດທາງແຜນການຮອດທ້າຍປີ 2023; 3) ການສະຫຼຸບຂາດຕົວງົບປະມານ ປີ 2022, ການຈັດຕັ້ງປະຕິບັດ 6 ເດືອນຕົ້ນປີ ແລະ ຄາດຄະເນ 6 ເດືອນທ້າຍປີ 2023. ພ້ອມນີ້, ກໍໄດ້ປຶກສາຫາລືບາງບັນຫາທີ່ປິ່ນອ້ອມຈຳນວນໜຶ່ງ ເພື່ອພິຈາລະນາຮັບຮອງ.

ກອງປະຊຸມໄດ້ດຳເນີນໄປເປັນເວລາເຄິ່ງວັນ. ບັນດາສະມາຊິກສະພາບໍລິຫານ ແລະ ຜູ້ແທນກອງປະຊຸມໄດ້ຄົ້ນຄວ້າປະກອບຄຳຄິດຄຳເຫັນຕໍ່ກັບເນື້ອໃນຂອງກອງປະຊຸມຢ່າງກົງໄປກົງມາ ແລະ ປຶກສາຫາລືຫາທາງອອກໃຫ້ແຕ່ລະບັນຫາທີ່ຍົກຂຶ້ນ ເພື່ອສາມາດນຳເອົາໄປຈັດຕັ້ງປະຕິບັດໃຫ້ເກີດໝາກຜົນຕົວຈິງ.

**# ຂ່າວ-ພາບ: ວັນປະເສີດ ສີມບຸນຂັນ**

***ຄົນລາວຮັກເມືອງລາວໃຊ້ເງິນກີບລາວ***